# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ
# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 2
## ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ ສປປ ລາວ
## Economic Dispute Resolution Organization in Lao PDR

ຕາມຫຼັກທິດສະດີ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນໜ່ວຍງານໜຶ່ງຂອງລັດຖະບານ ແລະ ມີທັງອົງການທີ່ເປັນເອກະລາດ ທີ່ມີລັກສະນະວິຊາຊີບ ແລະ ກົດໝາຍ ມີໜ້າທີ່ໃຫ້ບໍລິການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ຈາກການລະເມີດສັນຍາ ການຮ່ວມມືທາງດ້ານການທຸລະກິດ ລະຫວ່າງບຸກຄົນກັບບຸກຄົນ, ບຸກຄົນກັບນິຕິບຸກຄົນ, ນິບຸກຄົນກັບນິຕິບຸກຄົນ, ບຸກຄົນກັບການຈັດຕັ້ງ ແລະ ການຈັດຕັ້ງກັບການຈັດຕັ້ງ. ດັ່ງນັ້ນ, ໃນບົດນີ້ຈະໄດ້ສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ ໂດຍສະເພາະ ແມ່ນສູນແກ້ໄຂຂໍ້ຂັດແຍ່ງທາງດານເສດຖະກິດ, ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ບາງອົງການ ຈັດຕັ້ງສາກົນ ທີ່ມີພາລະບົດບາດດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ-ການຄ້າ.

### 1. ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

#### 1.1. ທີ່ຕັ້ງພາລະບົດບາດ

ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ ແມ່ນການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງຍຸຕິ ທໍາ ມີພາລະບົດບາດເປັນເສນາທິການໃຫ້ລັດຖະມົນຕີກະຊວງຍຸຕິທໍາ ໃນການຄຸ້ມຄອງ ແລະ ດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລະຫວ່າງການຈັດຕັ້ງກັບການຈັດຕັ້ງ, ການຈັດຕັ້ງກັບບຸກຄົນ, ບຸກຄົນກັບບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ສະເໜີໃຫ້ ສກສ ແກ້ໄຂ; ຄຸ້ມຄອງຜູ້ໄກ່ເກ່ຍ ແລະ ກໍາມະການຕັດສິນ ຂອງ ສກສ ແລະ ຫກສ, ຊີ້ນໍາທາງດ້ານວິຊາການຕໍ່ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດປະຈໍາຢູ່ບັນດາແຂວງ, ພົວພັນກັບບັນດາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ແລະ ສາກົນ, ຄົ້ນຄວ້າປັບປຸງລະບຽບການ ແລະ ກົດໝາຍ ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສະເໜີໃຫ້ຂັ້ນເທິງພິຈາລະນາ [1].

ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທໍາ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ກໍານົດຢູ່ໃນ ມາດຕາ 2 ວ່າ: ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂຽນຕົວອັກສອນຫຍໍ້ວ່າ "ສກສ" ແມ່ນກົງຈັກບໍລິຫານວິຊາການ ທີ່ມີລັກ ສະນະວິຊາຊີບສັງຄົມ ແລະ ກົດໝາຍ, ມີຖານະເທົ່າກັບກົມ ຊຶ່ງຂຶ້ນກັບການຄຸ້ມຄອງຂອງກະຊວງຍຸຕິທໍາ, ມີພາລະບົດບາດ ໃຫ້ບໍລິການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ; ຊຸກຍູ້, ຕິດຕາມການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ; ຊີ້ນໍາ, ຕິດຕາມກວດກາການເຄື່ອນໄຫວວຽກງານວິຊາການຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງເສດຖະກິດຢູ່ທ້ອງຖິ່ນ.

#### 1.2. ສິດ ແລະ ໜ້າທີ່ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ດໍາເນີນ

---

[1] ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທໍາ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບ ປີ 2017, ມາດຕາ 2

ໄປຕາມຫຼັກການ, ຖືກຕ້ອງ ຕາມຫຼັກວິຊາສະເພາະ ແລະ ສາມາດຮອງຮັບການບໍລິການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ ໃຫ້ດໍາເນີນໄປຕາມທິດການສ້າງລັດທີ່ປົກຄອງດ້ວຍກົດໝາຍ. ສະນັ້ນ, ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງມີສິດ ແລະ ໜ້າທີ່ ດັ່ງນີ້ [2]:

1) ຄົ້ນຄວ້າ ແລະ ສະເໜີສ້າງ, ປັບປຸງລະບຽບການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ກະຊວງຍຸຕິທໍາພິຈາລະນາ;
2) ຄົ້ນຄວ້າ ແລະ ນໍາສະເໜີຕໍ່ລັດຖະມົນຕີກະຊວງຍຸຕິທໍາ ເພື່ອແຕ່ງຕັ້ງ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ເຂົ້າໃນບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ ຫຼື ປົດບຸກຄົນດັ່ງກ່າວ ອອກຈາກບັນຊີ;
3) ໂຄສະນາ, ສຶກສາອົບຮົມກົດໝາຍ, ລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4) ພິຈາລະນາ ແຕ່ງຕັ້ງ ຫຼື ປ່ຽນຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກໍາມະການຕັດສິນ ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງແຕ່ລະຄັ້ງ ຕາມກົດໝາຍ;
5) ໃຫ້ຄໍາປຶກສາ, ແນະນໍາຄູ່ກໍລະນີ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;
6) ຄຸ້ມຄອງຂໍ້ມູນ, ຂ່າວສານ, ເກັບກໍາບັນທຶກການໄກ່ເກ່ຍ ຫຼື ການຕັດສິນ ແລະ ອໍານວຍຄວາມສະດວກໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;
7) ຮັບຄໍາຮ້ອງ, ເອກະສານ, ຂໍ້ມູນ, ຫຼັກຖານ ຈາກຄູ່ກໍລະນີ ເພື່ອມອບໃຫ້ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກໍາມະການຕັດສິນ;
8) ສ້າງ, ບໍາລຸງ ແລະ ຍົກລະດັບທາງດ້ານວິຊາການ ໃຫ້ແກ່ຜູ້ໄກ່ເກ່ຍ, ຜູ້ຕັດສິນ ແລະ ພະນັກງານຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
9) ຕິດຕໍ່ພົວພັນກັບຄູ່ກໍລະນີ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອອໍານວຍຄວາມສະດວກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກໍາມະການຕັດສິນ;
10) ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
11) ຊີ້ນໍາດ້ານວິຊາການ ໃຫ້ແກ່ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
12) ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການມອບໝາຍຂອງຂັ້ນເທິງ;
13) ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕໍ່ກະຊວງຍຸຕິທໍາ ຢ່າງເປັນປົກກະຕິ;
14) ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### 1.3. ໂຄງປະກອບກົງຈັກການຈັດຕັ້ງຂອງ ສກສ

**ກ. ການຈັດຕັ້ງ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສກສ)**

---

[2] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018 ມາດຕາ 60

ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທຳ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ ປີ 2017, ມາດຕາ 5 ໄດ້ກຳນົດໂຄງປະກອບກົງຈັກການຈັດຕັ້ງຂອງ ສກສ ດັ່ງນີ້:

**1) ພະແນກສັງລວມ ແລະ ບໍລິຫານ**

ພະແນກສັງລວມ ແລະ ບໍລິຫານມີ ໜ້າທີ່ [3] ຄື:

- ຄົ້ນຄວ້າຫັນແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສັງລວມ ແລະ ບໍລິຫານ ເປັນແຜນການ, ແຜນງານ, ໂຄງການລະອຽດແຕ່ລະໄລຍະ ເພື່ອຈັດຕັ້ງປະຕິບັດວຽກງານຂອງ ສກສ ໃຫ້ມີປະສິດຕິພາບ ແລະ ປະສິດທິຜົນ;
- ສະຫຼຸບສັງລວມການປະຕິບັດວຽກງານ ແລະ ວາງທິດທາງແຜນການເຄື່ອນໄຫວວຽກງານຂອງ ສກສແຕ່ລະໄລຍະເປັນປົກກະຕິ; ປະສານສົມທົບກັບ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ເປັນເສນາທິການໃຫ້ແກ່ຄະນະ ສກສ ໃນການກະກຽມກອງປະຊຸມສ່ອງແສງປະຈຳອາທິດ, ເດືອນພ້ອມທັງບັນທຶກກອງປະຊຸມດັ່ງກ່າວ ແລະ ປະຊາສຳພັນກັບບັນດາພະແນກພາຍໃນ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຄົ້ນຄວ້າ, ຂຶ້ນແຜນງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ຫ້ອງການຕ່າງໆ ພ້ອມທັງຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ໃຫ້ຖືກຕ້ອງຕາມລະບຽບການ;
- ຮັບ, ບັນທຶກ, ຈໍລະຈອນແຈກຢາຍ, ສຳເນົາ, ຄຸ້ມຄອງເອກະສານ, ຕາປະທັບ, ປຶ້ມບັນທຶກຂອງ ສກສໃຫ້ເປັນລະບົບ ແລະ ຮັບປະກັນຄວາມລັບທາງລັດຖະການ;
- ຕິດຕາມການປະຕິບັດກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ແລະ ລະບຽບການພາຍໃນຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ປະສານສົມທົບກັບຫ້ອງການ, ບັນດາກົມ, ອົງການລັດທຽບເທົ່າກົມພາຍໃນກະຊວງ, ພະແນກຍຸຕິທຳທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານຂອງ ສກສ;
- ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**2) ພະແນກຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.**

ພະແນກຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງ ມີໜ້າທີ່ [4] ດັ່ງນີ້:

- ຄົ້ນຄວ້າ, ກວດກາຄຳຮ້ອງຂໍ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ຂຶ້ນສຳນວນຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ສອດຄ່ອງກັບກົດໝາຍ;
- ປະສານສົມທົບກັບຄູ່ກໍລະນີ, ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ, ວ່ອງໄວ ແລະ ຍຸຕິທຳ;

[3] ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງຍຸຕິທຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2017, ມາດຕາ 7

[4] ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງຍຸຕິທຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບ 2017, ມາດຕາ 8

- ເຂົ້າຮ່ວມບັນທຶກ, ທວງເອົາຂໍ້ມູນ, ຫຼັກຖານ ເອກະສານທີ່ກ່ຽວຂ້ອງກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຄຸ້ມຄອງ, ຊຸກຍູ້, ຕິດຕາມ ການປະຕິບັດໜ້າທີ່ຂອງຜູ້ໄກ່ເກ່ຍ, ຜູ້ຕັດສີນ ແລະ ປະເມີນການປະຕິບັດໜ້າທີ່ຂອງຜູ້ໄກ່ເກ່ຍ, ຜູ້ຕັດສີນ ໃນທຸກໆ 2 ປີ ເພື່ອລາຍງານຕໍ່ລັດຖະມົນຕີກະຊວງຍຸຕິທຳ;
- ຄົ້ນຄວ້າ ແລະ ນຳສະເໜີຕໍ່ຫົວໜ້າ ສກສ ແຕ່ງຕັ້ງ, ປົດ, ປ່ຽນ ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສີນ ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງໃດໜຶ່ງ;
- ຄົ້ນຄວ້າ ແລະ ນຳສະເໜີ ຕໍ່ຫົວໜ້າ ສກສ ກ່ຽວກັບການໂຈະ, ເລື່ອນການດຳເນີນການໄກ່ເກ່ຍ ແລະ ກຳມະການຕັດສີນ;
- ຄົ້ນຄວ້າ, ສ້າງແຜນການກໍ່ສ້າງ, ຫຼັກສູດການຮຽນ-ການສອນ ແລະ ຝຶກອົບຮົມໃຫ້ພະນັກງານ, ຜູ້ໄກ່ເກ່ຍ, ຜູ້ຕັດສີນຂອງ ສກສ ແລະ ຫກສ;
- ເກັບກຳສະຖິຕິກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອລາຍງານຂັ້ນເທິງ ຢ່າງເປັນປົກກະຕິ;
- ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະ ສກສ;

**3) ພະແນກຕິດຕາມການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ພະແນກຕິດຕາມການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີໜ້າທີ່ [5] ດັ່ງນີ້:

- ຄົ້ນຄວ້າ, ກວດກາ, ຊຸກຍູ້, ຕິດຕາມ ແລະ ສຶກສາອົບຮົມຄູ່ກໍລະນີ ເພື່ອຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ສະເໜີ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຄົ້ນຄວ້າ ແລະ ຢັ້ງຢືນ ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຄູ່ກໍລະນີ;
- ຄົ້ນຄວ້າ ແລະ ຮ່າງໜັງສືສະເໜີນຳສົ່ງຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຕາມການສະເໜີຂອງຄູ່ກໍລະນີ;
- ຄົ້ນຄວ້າ, ຮ່າງລະບຽບການ ກ່ຽວກັບການຕີລາຄາ, ປະມູນຫຼັກຊັບຄ້ຳປະກັນ ພ້ອມທັງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການແຕ່ງຕັ້ງຄະນະກຳມະການຕີລາຄາຫຼັກຊັບຄ້ຳປະກັນ ເພື່ອໃຊ້ແທນໜີ້ສິນ;
- ຮ່າງຄຳສັ່ງປິດ ແລະ ເກັບຮັກສາສຳນວນຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ເກັບກຳສະຖິຕິ ກ່ຽວກັບການປະຕິບັດຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອລາຍງານຂັ້ນເທິງ ຢ່າງເປັນປົກກະຕິ;
- ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະ ສກສ.

**4) ພະແນກນິຕິກຳ**

[5] ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງຍຸຕິທຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບ 2017 ມາດຕາ 9

ພະແນກນິຕິກຳ ມີໜ້າທີ່ [6] ດັ່ງນີ້:

- ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ, ລັດຖະບັນຍັດ, ດຳລັດ, ຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງ, ແຈ້ງການ, ຄູ່ມື ແລະ ນິຕິກຳອື່ນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ ກິດ;
- ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຄົ້ນຄວ້າສ້າງ ແລະ ປັບປຸງ ປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຂອງ ສກສ ແລະ ຫກສ;
- ຄົ້ນຄວ້າ, ສະເໜີ ແຕ່ງຕັ້ງ, ປົດ ຫຼື ລຶບຊື່ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຕໍ່ລັດຖະມົນຕີກະຊວງຍຸຕິທຳ ເພື່ອພິຈາລະນາ; ຄຸ້ມຄອງ ແລະ ອອກບັດຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ;
- ຄົ້ນຄວ້າປະກອບຄຳເຫັນ ແລະ ເກັບກຳສະຖິຕິ ກ່ຽວກັບຄຳຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕ່າງປະເທດ ແລະ ສາກົນ ທີ່ສົ່ງໃຫ້ ສປປ ລາວ ຈັດຕັ້ງປະຕິບັດ;
- ຄົ້ນຄວ້າ, ສ້າງແຜນການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ປະຕິບັດສິດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະ ສກສ.

### ຂ. ບຸກຄະລາກອນ

ບຸກຄະລາກອນ ໝາຍເຖິງພະນັກງານຜູ້ເຮັດວຽກໂດຍກົງ ແລະ ເຮັດວຽກກ່ຽວຂ້ອງກັບອົງການ. ດັ່ງນັ້ນ, ອົງການຈະໄດ້ຮັບການພັດທະນາທີ່ດີ, ມີການບໍລິຫານຈັດການທີ່ດີ ກ່ອນອື່ນໝົດ ແມ່ນມີບຸກຄະລາກອນທີ່ມີຄວາມສາມາດ, ມີຄວາມຮູ້ ແລະ ຮັກອາຊີບນັ້ນ ເປັນຜູ້ຂັບເຄື່ອນ. ສະນັ້ນ, ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2017 ຈຶ່ງກຳນົດ ໄວ້ໃນມາດຕາ 6 ກ່ຽວກັບບຸກຄະລາກອນ ດັ່ງນີ້:

- ຫົວໜ້າ ສກສ 01 ທ່ານ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ບົນພື້ນຖານຄວາມເປັນເອກະພາບກັບລັດຖະມົນຕີ ກະຊວງຍຸຕິທຳ;
- ຫົວໜ້າ ສກສ ເປັນຜູ້ຮັບຜິດຊອບຕໍ່ຄະນະພັກ, ຄະນະນຳກະຊວງ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງ ສກສ ຕາມທີ່ກຳນົດໄວ້ໃນ ມາດຕາ 3 ແລະ 4 ຂອງຂໍ້ຕົກລົງສະບັບນີ້, ໃນເວລາຕິດຂັດຫົວໜ້າ ສກສ ຕ້ອງມອບສິດໃຫ້ ຮອງຫົວໜ້າ ສກສ ທ່ານໃດໜຶ່ງ ເປັນຜູ້ຮັກສາການ;
- ຮອງຫົວໜ້າ ສກສ ຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງຍຸຕິທຳ ບົນພື້ນຖານຄວາມເປັນເອກະພາບກັບກະຊວງພາຍໃນ;

[6] ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງຍຸຕິທຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບ 2017 ມາດຕາ 10

- ຮອງຫົວໜ້າ ສກສ ເປັນຜູ້ຊ່ວຍວຽກຫົວໜ້າ ສກສ ໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງ ສກສ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງຫົວໜ້າ ສກສ;
- ກໍລະນີ ຫົວໜ້າ ສກສ ບໍ່ຢູ່, ຮອງຫົວໜ້າ ສກສ ເປັນຜູ້ຮັກສາການແທນຕາມການມອບໝາຍ ຢ່າງເປັນລາຍລັກອັກສອນ;
- ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ວິຊາການຈຳນວນໜຶ່ງ ຊຶ່ງໄດ້ຮັບການບັນຈຸ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍລັດຖະມົນຕີກະຊວງຍຸຕິທຳ;
- ຫົວໜ້າ, ຮອງຫົວໜ້າ ພະແນກ ແລະ ວິຊາການ ປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດ ແລະ ຕຳແໜ່ງງານທີ່ກຳນົດໄວ້.

## 2.ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ຫກສ)

### 2.1. ທີ່ຕັ້ງພາລະບົດບາດ

ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນເປັນໜ່ວຍງານໜຶ່ງສັງກັດພະແນກຍຸຕິທຳແຂວງ ແລະ ນະຄອນຫຼວງ. ສະນັ້ນ, ອີງຕາມຂໍ້ຕົກລົງຂອງ ລັດຖະມົນຕີກະຊວງຍຸຕິທຳ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກຍຸຕິທຳແຂວງ ແລະ ນະຄອນຫຼວງ ສະບັບເລກທີ 1268/ກຍ, ລົງວັນທີ 16 ພະຈິກ 2017 ໄດ້ກຳນົດໄວ້ໃນມາດຕາ 14 ຊຶ່ງມີລາຍລະອຽດ ດັ່ງນີ້:

- ຄົ້ນຄວ້າ ແລະ ຫັນກົດໝາຍ ແລະ ລະບຽບການກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມາເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຜົນດີ;
- ຮັບຄຳຮ້ອງ ແລະ ສຳນວນຂໍ້ຂັດແຍ່ງ, ຕິດຕໍ່ພົວພັນກັບຄູ່ກໍລະນີ ແລະ ພາກສ່ວນກ່ຽວຂ້ອງ ເພື່ອໃຫ້ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສີນ ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຕິດຕາມ, ເກັບກຳຜົນຂອງການຈັດຕັ້ງປະຕິບັດຄຳຕົກລົງຂອງການໄກ່ເກ່ຍ, ຄຳຕົກລົງຂອງຄູ່ກໍລະນີກ່ອນການຕັດສີນ ແລະ ຄຳຕັດສິນຂອງກຳມະການຕັດສີນ;
- ເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ໃຫ້ຖືກຕ້ອງຕາມລະບຽບການ ແລ້ວລາຍງານໃຫ້ຫົວໜ້າພະແນກຍຸຕິທຳ ຢ່າງເປັນປົກກະຕິ;
- ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດານເສດຖະກິດ; ຕິດຕໍ່ພົວພັນກັບຄູ່ກໍລະນີ, ປະສານສົມທົບກັບພາກສ່ວນ ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ສະຫຼຸບ, ສັງລວມ, ລາຍງານການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຮອບດ້ານຂອງຕົນ ໃຫ້ຫົວໜ້າພະແນກຍຸຕິທຳ ຢ່າງເປັນປົກກະຕິ;
- ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະພະແນກຍຸຕິທຳ.

### 2.2. ສິດ ແລະ ໜ້າທີ່ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

- ນຳສະເໜີຫາ ສກສ ເພື່ອຄົ້ນຄວ້າກ່ຽວກັບການແຕ່ງຕັ້ງ ຜູ້ໄກ່ເກ່ຍ ແລະ ຜູ້ ຕັດສີນ ເຂົ້າໃນບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສີນ ຫຼື ປົດບຸກຄົນດັ່ງກ່າວ ອອກຈາກບັນຊີ ຕໍ່ລັດຖະມົນຕີກະຊວງຍຸຕິທຳ ເພື່ອພິຈາລະນາ;

- ໂຄສະນາ, ສຶກສາອົບຮົມກົດໝາຍ, ລະບຽບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ ກິດ;

- ພິຈາລະນາ ແຕ່ງຕັ້ງ ຫຼື ປ່ຽນຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກໍາມະການຕັດສິນ ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງແຕ່ລະຄັ້ງ ຕາມກົດໝາຍ;

- ໃຫ້ຄໍາປຶກສາ, ແນະນໍາຄູ່ກໍລະນີ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;

- ຄຸ້ມຄອງຂໍ້ມູນ, ຂ່າວສານ, ເກັບກໍາບັນທຶກການໄກ່ເກ່ຍ ຫຼື ການຕັດສິນ ແລະ ອໍານວຍຄວາມສະດວກໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;

- ຮັບຄໍາຮ້ອງ, ເອກະສານ, ຂໍ້ມູນ, ຫຼັກຖານ ຈາກຄູ່ກໍລະນີ ເພື່ອມອບໃຫ້ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກໍາມະການຕັດສິນ;

- ຕິດຕໍ່ພົວພັນກັບຄູ່ກໍລະນີ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອອໍານວຍຄວາມສະດວກ ໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກໍາມະການຕັດສິນ;

- ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການມອບໝາຍຂອງຂັ້ນເທິງ;

- ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ຕໍ່ກະຊວງຍຸຕິທໍາຢ່າງເປັນປົກກະຕິ;

- ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### 2.3. ໂຄງປະກອບກົງຈັກການຈັດຕັ້ງ

ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີພາລະບົດບາດເປັນເສນາທິການໃຫ້ ສກສ, ພະແນກຍຸຕິທໍາ ແລະ ອົງການປົກຄອງແຂວງ ແລະ ນະຄອນຫຼວງ ໃນການຄຸ້ມຄອງ ແລະ ດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລະຫວ່າງການຈັດຕັ້ງກັບການຈັດຕັ້ງ, ການຈັດຕັ້ງກັບບຸກຄົນ, ບຸກຄົນກັບບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ສະເໜີໃຫ້ ຫກສ ແກ້ໄຂ, ຄຸ້ມຄອງບັນດາຜູ້ໄກ່ເກ່ຍ, ຜູ້ຕັດສິນ ຂອງ ຫກສ ແລະ ພົວພັນກັບບັນດາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການເຫັນດີ ຂອງ ສກສ ແລະ ອົງການປົກຄອງແຂວງ ຫຼື ນະຄອນຫຼວງ[7].

#### ກ. ການຈັດຕັ້ງ

ການຈັດຕັ້ງຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບມີສອງໜ່ວຍງານ ຄື:

1) ໜ່ວຍງານຄຸ້ມຄອງບໍລິຫານ

ໜ່ວຍງານຄຸ້ມຄອງບໍລິຫານ ມີໜ້າທີ່ ດັ່ງນີ້:

---

[7] ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທໍາ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສກສ ແລະ ຫກສ ສະບັບເລກທີ 077/ກຍ, ລົງວັນທີ 13 ມີນາ 2008.

- ຮັບຜິດຊອບວຽກງານເລຂານຸການ, ບໍລິຫານ ແລະ ປົກປັກຮັກສາຊັບສິນບັດ ຂອງ ຫກສ;
- ສະຫຼຸບບັນຊີ-ການເງິນຂອງ ຫກສ ແລ້ວລາຍງານໃຫ້ຂັ້ນເທິງ;
- ກະກຽມສະຖານທີ່ ເພື່ອເປີດກອງປະຊຸມກ່ຽວກັບວຽກງານຂອງ ຫກສ;
- ຄຸ້ມຄອງບັນດາຜູ້ໄກ່ເກ່ຍ, ຜູ້ຕັດສິນ ຂອງ ຫກສ;
- ປະສານສົມທົບວຽກງານກັບພາກສ່ວນອື່ນໆ ທີ່ກ່ຽວຂ້ອງ;
- ສະຫຼຸບ, ສັງລວມ ແລະ ສ້າງແຜນວຽກງານ ຂອງ ຫກສ ໃນແຕ່ລະໄລຍະ;
- ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຄະນະ ຫກສ.

**2) ໜ່ວຍງານຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໜ່ວຍງານຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີໜ້າທີ່ ດັ່ງນີ້:

- ຄົ້ນຄ້ວາ ແລະ ກວດກາຄໍາຮ້ອງ ຂອງຄູ່ກໍລະນີ ທີ່ໄດ້ຮ້ອງຂໍໃຫ້ ຫກສ ແກ້ໄຂ;
- ຮ່າງໜັງສືແຈ້ງຕອບຄູ່ກໍລະນີ ຖ້າເຫັນວ່າຄໍາຮ້ອງຂໍແກ້ໄຂ ບໍ່ຖືກຕ້ອງຕາມເງື່ອນໄຂ ໃນການແກ້ໄຂຂໍ້ຂັດແຍ່ງ;
- ຄົ້ນຄ້ວາ ແລະ ປະກອບເອກະສານຕ່າງໆ ເພື່ອຂຶ້ນສໍານວນຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ພົວພັນ, ປະສານສົມທົບກັບຄູ່ກໍລະນີ, ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ປະສານສົມທົບກັບໜ່ວຍງານຄຸ້ມຄອງ-ບໍລິຫານ, ອອກໝາຍເຊີນ, ຈົດໝາຍນໍາສົ່ງຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ກະກຽມສະຖານທີ່ ດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ທວງເອົາຂໍ້ມູນ, ຫຼັກຖານຈາກຄູ່ກໍລະນີ ແລະ ພາກສ່ວນກ່ຽວຂ້ອງ, ທັງເປັນຜູ້ບັນທຶກກອງປະຊຸມການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຄຸ້ມຄອງສໍານວນເອກະສານຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຕິດຕາມການຈັດຕັ້ງປະຕິບັດບົດບັນທຶກການໄກ່ເກ່ຍ, ຄໍາຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ແລະ ຄໍາຕັດສິນຂອງກໍາມະການຕັດສິນ;
- ສະຫຼຸບ, ສັງລວມ ແລະ ການສ້າງແຜນການເຄື່ອນໄຫວວຽກງານ ຂອງໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ ຂອງຄະນະ ຫກສ.

**ຂ. ບຸກຄະລາກອນ**

ບຸກຄະລາກອນຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບມີ ດັ່ງນີ້:

- ມີຫົວໜ້າຫ້ອງການ 1 ທ່ານ ແລະ ຮອງຫົວໜ້າ ຫກສ ຈໍານວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງໂດຍເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງວຽງຈັນ ຕາມການເຫັນດີເປັນເອກະພາບກັບລັດຖະມົນຕີກະຊວງຍຸຕິທໍາ;
- ມີ ຫົວໜ້າໜ່ວຍງານ 1 ທ່ານ ຫຼື ຮອງຫົວໜ້າໜ່ວຍງານ ຈໍານວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ,ປົດຕໍາແໜ່ງໂດຍເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງວຽງຈັນ ຕາມການເຫັນດີເປັນເອກະພາບກັບ

ລັດຖະມົນຕີກະຊວງຍຸຕິທຳ;

- ມີພະນັກງານວິຊາການຈຳນວນໜຶ່ງ ຕາມຄວາມເໝາະສົມ.

**References:**


1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 52/ສພຊ, ລົງວັນທີ 22/6/2018.
2. ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທຳ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບ ປີ 2017.
3. ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສກສ ແລະ ຫກສ ສະບັບເລກທີ 077/ກຍ, ລົງວັນທີ 13 ມີນາ 2008.
4. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, ປີ 2020.
5. ປຶ້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.